ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

❀❀❀❀❀❀❀❀❀

ເລກທີ.....01...../ສລ2

# ສັນຍາການຊື້-ຂາຍ ດິນ

## ລະຫວ່າງ:

ນາງ ບຸນທັນ ແລະ ທ້າວ ສຸກສະຫວັນ ປະຈຸບັນຢູ່ບ້ານສັງຄະໂລກ, ເມືອງຫຼວງພະບາງ, ແຂວງ ຫຼວງພະບາງ. ເບີຕິດຕໍ່: 22136664, 22352225 ຊຶ່ງເປັນຜູ້ຂາຍດິນ ເອີ້ນວ່າ:(ຝ່າຍ ກ.) ໄດ້ຕົກລົງ ຂາຍດິນ ຈຳນວນ 2 ຕອນ.

ໃຫ້ກັບ

ທ່ານ ເພັດຈຳພອນ ຂຸນດາລາ ປະຈຸບັນ ຢູ່ບ້ານ ຊຽງທອງ ເບີໂທ: 55510957, ທ່ານ ອ້ອນ ສຸກຂີທີ ປະຈຸບັນ ຢູ່ບ້ານ ພັນຫຼວງ ເບີໂທ: 55570351, ແລະ ທ່ານ ແສງວົງຈິດ ຍ່າງວິໄລ ປະຈຸບັນ ຢູ່ບ້ານ ວຽງແກ້ວ ເບີໂທ: 55894549 ຢູ່ທີ່ ເມືອງ ຫຼວງພະບາງ, ແຂວງ ຫຼວງພະບາງ ຊຶ່ງຮ່ວມກັນເປັນຜູ້ ຊື້ດິນ ເອີ້ນວ່າ:(ຝ່າຍ ຂ.).

ທັງສອງຝ່າຍໄດ້ຕົກລົງເອກະພາບກັນ ເຊັນຂໍ້ຜູກພັນສັນຍາດຳເນີນການ ຊື້-ຂາຍ ດິນພາຍໃຕ້ເງື່ອນໄຂ ລະອຽດດັ່ງລຸ່ມນີ້:

## ພາກທີ I
## ວ່າດ້ວຍລະບຽບຫຼັກການລວມ

<u>ມາດຕາ 01:</u>ຫຼັກການ ຊື້-ຂາຍ.

*ຂໍ້ 1.1 <u>ລາຍລະອຽດຂອງດິນ.</u>*

- ດິນຕອນທີ່ 1 ມີເນື້ອທີ່ 263 ຕາແມັດ ແຜນທີ່ໃບຕາດິນເລກທີ່ C-196-198/03 ເລກທີ່ 116 ອອກຊື່ ນ.ບຸນທັນ.
- ດິນຕອນທີ່ 2 ມີເນື້ອທີ່ 1 ເຮັກຕາ 5868 ຕາແມັດ ແຜນທີ່ໃບຕາດິນເລກທີ່ C-196-198/04 ເລກທີ່ 123 ອອກຊື່ ນ.ບຸນທັນ.

*ຂໍ້ 1.2 <u>ດ້ານລາຄາ.</u>*

ມູນຄ່າຂອງການຊື້-ຂາຍ ດິນ 2 ຕອນນີ້ ແມ່ນ: 9,600,000 Bath(ເກົ້າລ້ານຫົກແສນບາດຖ້ວນ).

<u>ມາດຕາ 02:</u>ດ້ານການຊຳລະເງິນ

ຂໍ້ 2.1 *ຮູບການຊໍາລະ.*

- ການຊໍາລະເງິນແມ່ນຈ່າຍເປັນງວດແລະ ໂອນເຂົ້າບັນຊີຂອງ ທະນາຄານການຄ້າຕ່າງປະເທດລາວ ນ.ບຸນທັນ ທີ່ຢູ່ ບ.ສັງຄະໂລກ ໝາຍເລກບັນຊີ: 050-4-12-02-02343 (ສະກຸນເງິນບາດ) ທີ່ມີການຮັບຮູ້ ແລະ ມີໃບການມອບໂອນ ຈາກທາງທະນາຄານເທົ່ານັ້ນ (ເຮັດບົດບັນທຶກການມອບຮັບເງິນແຕ່ລະຄັ້ງນໍາພ້ອມ).

- ການຊໍາລະແຕ່ລະງວດແມ່ນມອບ-ໂອນເປັນສະກຸນເງິນບາດເທົ່ານັ້ນເຖິງວ່າອັດຕາການແລກປ່ຽນຈະມີການປ່ຽນແປງກໍ່ຕາມ.

ຂໍ້ 2.2 *ການບັດໝາຍຖອກເງິນ:*

✦ງວດທີ່1 ວັນທີ່ 09/01/2012 ຈ່າຍ: 3,000,000 ບາດ.

✦ງວດທີ່2 ວັນທີ່ 01/01/2013 ຈ່າຍ: 3,000,000 ບາດ.

✦ງວດທີ່3 ວັນທີ່ 01/01/2014 ຈ່າຍ: 3,600,000 ບາດ.

---

<u>ມາດຕາ 03:</u> ການມອບ-ຮັບ

- ຂໍ້ 3.1 ຝ່າຍຜູ້ຂາຍ (ຝ່າຍ ກ.) ແມ່ນໃຫ້ຍົກຍ້າຍອອກຈາກດິນ ວັນທີ່ 30/12/2012.
- ຂໍ້ 3.2 ຝ່າຍຜູ້ຂາຍ (ຝ່າຍ ກ.) ຍິນຍອມໃຫ້ ຝ່າຍຜູ້ຊື້ດິນ (ຝ່າຍ ຂ.) ສາມາດດັດ, ປັບແປງໜ້າດິນຕ່າງໆ ໄດ້ ນັບແຕ່ມື້ທີ່ ຝ່າຍຜູ້ຊື້ດິນ (ຝ່າຍ ຂ.) ໄດ້ຈ່າຍເງິນງວດທໍາອິດສໍາເລັດ(ໂດຍແຈ້ງໃຫ້ຝ່າຍຜູ້ຂາຍດິນຮັບຊາບກ່ອນ).
- ຂໍ້ 3.3 ເມື່ອ ຝ່າຍຜູ້ຊື້ດິນ (ຝ່າຍ ຂ.) ຈ່າຍເງິນຄົບ ແມ່ນມອບໃຫ້ ຝ່າຍຜູ້ຂາຍດິນ (ຝ່າຍ ກ.) ເປັນຜູ້ດໍາເນີນແລ່ນເອກະສານການ ມອບໂອນ ໃບຕາດິນໃຫ້ ຝ່າຍຜູ້ຊື້ດິນ (ຝ່າຍ ຂ.) ຢ່າງຄົບຖ້ວນ, ສ່ວນຄ່າໃຊ້ຈ່າຍໃນການມອບໂອນຕ່າງໆ ນັ້ນແມ່ນໃຫ້ ຝ່າຍຜູ້ຂາຍດິນ (ຝ່າຍ ກ.) ເປັນຜູ້ຈ່າຍໝົດ.
- ຂໍ້ 3.4 ຖ້າຫາກ ຝ່າຍຜູ້ຊື້ (ຝ່າຍ ຂ.) ຫາກມີເງິນພໍກ່ອນກໍານົດແມ່ນຈະຖອກໃຫ້ຝ່າຍຜູ້ຂາຍໝົດເລີຍ ແລະ ຝ່າຍຜູ້ຂາຍດິນ (ຝ່າຍ ກ.) ຕ້ອງໄດ້ດໍາເນີນການມອບໂອນກໍາມະສິດຕາມຂັ້ນຕອນ (ໄລຍະ 15-30ວັນ ແລະ ລົງບັນທຶກປະຈໍາວັນກັນໄວ້).
- ຂໍ້ 3.5 ການຊື້ຂາຍດິນຕ້ອງເຮັດໃບຢັ້ງຢືນຈາກອໍານາດການປົກຄອງ ແລະ ຜ່ານທະບຽນສານ ຢ່າງຄັກແນ່, ຫ້າມເຈົ້າຂອງດິນເອົາໃບຕາດິນດັ່ງກ່າວໄປມັດຈໍາຄົນອື່ນເດັດຂາດ.

## ພາກທີ່ II
## ວ່າດ້ວຍມາດຕະການປະຕິບັດສັນຍາ

<u>ມາດຕາ 04:</u> ຖ້າຫາກ ຝ່າຍຜູ້ຊື້ດິນ (ຝ່າຍ ຂ.) ບໍ່ຈ່າຍເງິນຕາມກໍານົດທີ່ຕົກລົງໄວ້ນັ້ນໃນສັນຍາ ຝ່າຍຜູ້ຂາຍດິນ (ຝ່າຍ ກ.) ຕາມສັນຍາການຊື້-ຂາຍດິນ ທີ່ໄດ້ລະບຸໄວ້ຕາມ ມາດຕາ 2 ຂໍ້ 2.2 ແລະ ມາດຕາ

3 ຂໍ້ 3.2 ໃນສັນຍາສະບັບນີ້ ແມ່ນຈະຕ້ອງຍົກໃຫ້ ຝ່າຍຜູ້ຂາຍດິນ (ຝ່າຍ ກ.) ໂດຍປາສະຈາກການຮ້ອງຟ້ອງຄືນແຕ່ຢ່າງໃດ.

ມາດຕາ 05: ຫາກໃບຕາດິນດັ່ງກາວມີບັນຫາ ກັບບຸກຄົນທີ່ 3 ແມ່ນທາງຝ່າຍຊື້ຈະຕ້ອງໄດ້ປັບໃໝຜູ້ຂາຍສອງເທົ່າຕົວຂອງເງິນທີ່ໄດ້ຈ່າຍແລ້ວ (ກໍລະນີທີ່ ຝ່າຍຜູ້ຂາຍ (ຝ່າຍ ກ.) ໂອນໃບຕາດິນໃຫ້ກັບ ຝ່າຍຜູ້ຊື້ດິນ (ຝ່າຍ ຂ.) ບໍ່ໄດ້).

ມາດຕາ 06: ຫາກຝ່າຍໃດຝ່າຍໜຶ່ງຫາກບໍ່ປະຕິບັດຕາມສັນຍາທີ່ໄດ້ເຮັດຂຶ້ນນີ້ແມ່ນໃຫ້ປະຕິບັດຕາມລະບຽບກົດໝາຍຂອງ ສປປ ລາວ ວາງອອກທຸກປະການ.

ມາດຕາ 07: ຫ້າມຄູ່ສັນຍາ ຝ່າຍໃດໜຶ່ງປ່ຽນແປງ, ເພີ່ມເຕີມຂໍ້ຄວາມສັນຍາ ຫຼື ຍົກເລີກສັນຍາໂດຍບໍ່ໄດ້ຮັບຄວາມເຫັນດີຈາກອີກຝ່າຍໜຶ່ງ.

ມາດຕາ 08: ສັນຍາສະບັບນີ້ມີກຳນົດ 2ປີ ນັບແຕ່ວັນທີ່ 01/01/2012 ເຖິງວັນທີ່ 01/02/2014.

ມາດຕາ 09: ສັນຍາສະບັບນີ້ປະກອບມີ 2 ພາກ ແລະ 9ມາດຕາ, ເຮັດເປັນ 5ສະບັບ, ລວມມີ 3ໜ້າ, ທຸກສະບັບມີເນື້ອໃນ, ຂໍ້ຄວາມທັງໝົດກົງກັນໄດ້ອ່ານຄູ່ສັນຍາ ແລະ ພະຍານຟັງໂດຍຊ້ອງໜ້າອຳນາດການປົກຄອງບ້ານບ່ອນທີ່ດິນຕັ້ງຢູ່ໂດຍປາສະຈາກການບີບບັງຄັບ ແລະ ນາບຂູ່.

ດັ່ງນັ້ນ, ທັງສອງຝ່າຍຈຶ່ງໄດ້ພ້ອມກັນລົງລາຍເຊັນໄວ້ເພື່ອເປັນຫຼັກຖານ ສັນຍາສະບັບນີ້ມີຜົນສັກສິດນັບແຕ່ມື້ຄູ່ສັນຍາລົງລາຍເຊັນເປັນຕົ້ນໄປ.

ຝ່າຍ ຂ. (ຜູ້ຊື້ດິນ)

ພະຍານ(ຝ່າຍຜູ້ຊື້)

1........................
2........................
3........................

ຝ່າຍ ກ. (ຜູ້ຂາຍດິນ)

ພະຍານ(ຝ່າຍຜູ້ຂາຍ)

1........................
2........................
3........................

ທີ່ບ້ານ.....ຫ້ວຍໂລກ.....ວັນທີ່.....08/01/2012

ເຊັນ ແລະ ປະທັບຕາຈາກນາຍບ້ານ

ຄຳພັນ ວົງສອນເພັດ